ເສັ້ນທາງແຫ່ງມິດຕະພາບ

---ໃນໂອກາດວັນສ້າງຕັ້ງສາຍພົວພັນທາງການທູດ ລະຫວ່າງ ລາວ-ຈີນ ຄົບຮອບ 65 ປີ

ເສັ້ນທາງແຫ່ງການເຊື່ອມໂຍງ ບໍ່ແມ່ນພຽງແຕ່ການຂ້າມຜ່ານພູຜາ ແລະ ສາຍນ້ຳ, ແຕ່ແມ່ນການເປີດປະຕູສູ່ຫົວໃຈເຊິ່ງກັນ ແລະ ກັນ. ຈາກເສັ້ນທາງພູດອຍທີ່ຄົດລ້ຽວ ສູ່ເສັ້ນທາງເຫຼັກທີ່ທັນສະໄໝ, ຈາກການລໍຄອຍທີ່ຍາວນານ ສູ່ການເດີນທາງທີ່ສະດວກສະບາຍພຽງຊົ່ວຂ້າມຄືນ. ພວກເຮົາໄດ້ປ່ຽນໄລຍະທາງທີ່ຫ່າງໄກ ໃຫ້ກາຍເປັນການເຊື່ອມຈິດເຊື່ອມໃຈ. ແຕ່ສິ່ງທີ່ຍາວໄກກວ່າທາງລົດໄຟນັ້ນ ກໍຄືສາຍສຳພັນຂອງປະຊາຊົນສອງຊາດທີ່ໃກ້ຊິດກັນຂຶ້ນເລື້ອຍໆ. ເທິງເສັ້ນທາງສາຍນີ້, ບໍ່ໄດ້ມີພຽງແຕ່ສິນຄ້າ ແລະ ຜູ້ຄົນທີ່ສັນຈອນໄປມາ, ແຕ່ຍັງເຕັມໄປດ້ວຍມິດຕະພາບ ແລະ ຄວາມເຊື່ອໝັ້ນ; ມັນບໍ່ແມ່ນພຽງແຕ່ການໄປສູ່ຕົວເມືອງທີ່ຫ່າງໄກ, ແຕ່ແມ່ນການມຸ່ງໜ້າສູ່ອະນາຄົດ ແລະ ຄວາມຝັນຮ່ວມກັນ.

ຄວາມຝັນທາງລົດໄຟທີ່ຂ້າມພູຜາ ແລະ ທະເລ

ໂດຍ: ນາງ ລຳພອນ ທິບມາລາ, ຄູສອນວິທະຍາໄລເຕັກນິກ-ວິຊາຊີບການລົດໄຟລາວ

ເດືອນທັນວາ 2021 ເສັ້ນທາງລົດໄຟ ລາວ–ຈີນ ໄດ້ເປີດການນຳໃຊ້ຢ່າງເປັນທາງການ. “ມັງກອນເຫຼັກໃຫຍ່” ທີ່ແລ່ນດ້ວຍຄວາມໄວນັ້ນ ກໍຕ້ອງການບຸກຄະລາກອນມືອາຊີບ ເພື່ອຄວບຄຸມມັນ. ດ້ວຍການຮັບມອບໝາຍຈາກປະເທດ ແລະ ຄວາມຝັນສ່ວນຕົວ, ໃນເດືອນມັງກອນ 2022 ຂ້ອຍຮູ້ສຶກເປັນກຽດຫຼາຍທີ່ໄດ້ເປັນໜຶ່ງໃນບັນດາຄູຊາວລາວ 40 ຄົນ ໄດ້ຂ້າມພູຜາ ແລະ ທະເລ ເພື່ອມາຮຽນຢູ່ວິທະຍາໄລເຕັກນິກ-ວິຊາຊີບການລົດໄຟຄຸນໝິງປະເທດຈີນ. ເປົ້າໝາຍຊັດເຈນຂອງຂ້ອຍແມ່ນ: ຮຽນຮູ້ເຕັກໂນໂລຊີຫຼັກໆຂອງການດຳເນີນງານລົດໄຟ ແລະ ນຳຄວາມຮູ້ທີ່ແທ້ຈິງນີ້ກັບມາປະເທດລາວ ເພື່ອສອນໃຫ້ນັກຮຽນຮຸ່ນຕໍ່ໆໄປ.

ໃນຕອນທຳອິດ ຂ້ອຍເລີ່ມຕົ້ນຈາກພື້ນຖານສູນ ເນື່ອງຈາກຂ້ອຍບໍ່ຮູ້ພາສາຈີນ ແລະ ກໍຍັງບໍ່ມີປະສົບການດ້ານເຕັກນິກລົດໄຟ. ເມື່ອເຫັນຕົວອັກສອນຈີນເຕັມກະດານ ແລະ ແຜນຜັງວົງຈອນທີ່ຊັບຊ້ອນ ຂ້ອຍຮູ້ສຶກສັບສົນ ແລະ ກັງວົນຫຼາຍ. ແຕ່ຄວາມອົບອຸ່ນ

ຈາກອາຈານ ແລະ ນັກສຶກສາຂອງໂຮງຮຽນ ໄດ້ຊ່ວຍຫຼຸດຄວາມກັງວົນຂອງຂ້ອຍ. ໂຮງຮຽນບໍ່ພຽງແຕ່ຈັດອຸປະກອນຝຶກປະຕິບັດທີ່ທັນສະໄໝໃຫ້ພວກເຮົາ ແຕ່ຍັງຈັດໃຫ້ນັກຮຽນຈີນຈັບຄູ່ຊ່ວຍເຫຼືອ “ສອງຕໍ່ສອງ”. ເພື່ອເຂົ້າໃຈຄຳສັ່ງໃນການ “ຮັບ–ສົ່ງຂົບຂະບວນລົດໄຟ” ແຕ່ລະຂັ້ນຕອນ ເພື່ອນຮ່ວມງານຈາກຈີນໄດ້ຢູ່ຝຶກຊ້ອມກັບຂ້ອຍໃນຫ້ອງຝຶກຈົນເດິກ ແລະ ທົດລອງຊ້ຳຄືນຫຼາຍສິບຄັ້ງ. ພາສາຈຶ່ງບໍ່ເປັນອຸປະສັກອີກຕໍ່ໄປ ເພາະການສື່ສານຈາກໃຈສູ່ໃຈ ເຮັດໃຫ້ເຕັກນິກທີ່ເຄີຍໜ້າເບື່ອກາຍເປັນສິ່ງມີຊີວິດຊີວາ. ອາຈານຜູ້ມີປະສົບການສູງໄດ້ຖ່າຍທອດຄວາມຮູ້ຢ່າງເຕັມທີ່, ອາຈານແປພາສາກໍຊ່ວຍເຫຼືອຢ່າງອົດທົນ ເພື່ອໃຫ້ພວກເຮົາເຂົ້າໃຈທຸກໆຄຳສັບທາງວິຊາການໄດ້ຢ່າງຖືກຕ້ອງ.

ໃນການຝຶກອົບຮົມ 18 ເດືອນ, ຂ້ອຍໄດ້ຮຽນສາຂາ ຄຸ້ມຄອງການຂົນສົ່ງທາງລົດໄຟເປັນຫຼັກ. ຈາກຄົນທີ່ບໍ່ຮູ້ຫຍັງເລີຍ ຄ່ອຍໆກາຍເປັນຄົນທີ່ສາມາດສົນທະນາວິຊາການດ້ວຍພາສາຈີນໄດ້ຢ່າງຄ່ອງແຄ້ວ ແລະ ຊຳນານທັກສະທີ່ຈຳເປັນໃນວຽກງານ. ທຸກກ້າວຂອງຄວາມກ້າວໜ້າ ລ້ວນແຕ່ເກີດຈາກຄວາມພະຍາຍາມ ແລະ ຄວາມປະທັບໃຈຢ່າງເລິກເຊິ່ງ. ນອກເວລາຮຽນ ໂຮງຮຽນຍັງໄດ້ຈັດກິດຈະກຳນຳພາພວກເຮົາໄປທັດສະນະສຶກສານອກສະຖານທີ່ ເຊັ່ນ: ຕ້າຫຼີ, ລີ້ຈຽງ ແລະ ປັກກິ່ງ. ປະສົບການນີ້ໄດ້ຊ່ວຍເປີດວິໄສທັດຂອງຂ້ອຍໃຫ້ກວ້າງຂຶ້ນຫຼາຍ, ແລະ ຍັງເຮັດໃຫ້ຂ້ອຍເຂົ້າໃຈຢ່າງເລິກເຊິ່ງຍິ່ງຂຶ້ນກ່ຽວກັບຄວາມໝາຍທີ່ທາງລົດໄຟສາຍນີ້ ທີ່ເຊື່ອມຕໍ່ສອງປະເທດເຂົ້າກັນ.

ປັດຈຸບັນ ຫຼັງຈາກຮຽນຈົບ ຂ້ອຍໄດ້ກັບມາຢືນຢູ່ທີ່ຫ້ອງຮຽນທີ່ ວິທະຍາໄລເຕັກນິກ-ວິຊາຊີບການລົດໄຟລາວ. ທຸກມື້ຂ້ອຍທຸ້ມເທໃນວຽກງານການສອນ, ຖ່າຍທອດຄວາມຮູ້ກ່ຽວກັບວິຊາຕ່າງໆ ເຊັ່ນ : ພາສາຈີນພື້ນຖານ, ພາສາຈີນວິຊາສະເພາະ, ການຂົນສົ່ງຕູ້ສິນຄ້າ ແລະ ການຂົນສົ່ງຫຼາຍຮູບແບບ ໃຫ້ແກ່ນັກສຶກສາ. ຂ້ອຍຍັງພານັກຮຽນ ໄປທັດສະນະສຶກສາພາກປະຕິບັດທີ່ສະຖານທີ່ຕົວຈິງ ເຊັ່ນ: ສະຖານີລົດໄຟວຽງຈັນ ແລະ ສະຖານີລົດໄຟວຽງຈັນໃຕ້ ແລະ ບອກພວກເຂົາວ່າ: “ເບິ່ງແມ້ ນີ້ແຫຼະແມ່ນເສັ້ນເລືອດຫຼັກທີ່ພວກເຮົາຈະຕ້ອງຮັກສາໃນອະນາຄົດ.” ເມື່ອເຫັນນັກຮຽນຮຸ່ນທຳອິດທີ່ຂ້ອຍສອນ ກຳລັງຈະຮຽນຈົບ ແລະ ເຂົ້າໄປເຮັດວຽກໃນເສັ້ນທາງລົດໄຟ ລາວ–ຈີນ ໃນໃຈຂ້ອຍເຕັມໄປດ້ວຍຄວາມພາກພູມໃຈ ແລະ ຄວາມສຳເລັດ.

ຊ່ວງເວລາທີ່ຂ້ອຍພູມໃຈທີ່ສຸດແມ່ນເດືອນພຶດສະພາ 2025. ໃນການແຂ່ງຂັນທັກສະການນຳໃຊ້ພາສາຈີນຄັ້ງທີ 2 ຂອງວິທະຍາໄລ ນັກຮຽນ 3 ຄົນທີ່ຂ້ອຍນຳພາໄດ້ຮັບລາງວັນພິເສດ, ລາງວັນທີ 2 ແລະ ລາງວັນທີ 3. ເມື່ອຢືນຢູ່ຂ້າງລຸ່ມເວທີ ແລະ ເຫັນຮອຍຍິ້ມທີ່ເຕັມໄປດ້ວຍຄວາມໝັ້ນໃຈຂອງນັກຮຽນ ນ້ຳຕາຂ້ອຍໄຫຼເຕັມເບົ້າຕາ. ນີ້ບໍ່ແມ່ນແຕ່ກຽດຂອງພວກເຂົາເທົ່ານັ້ນ ແຕ່ຍັງເປັນການຢືນຢັນຜົນງານການສອນຂອງຂ້ອຍ ແລະ ເປັນພິຍານຂອງມິດຕະພາບລາວ–ຈີນ ທີ່ຖືກສືບຕໍ່ສົ່ງຕໍ່ກັນຢ່າງບໍ່ຂາດຕອນ.

ທາງລົດໄຟອາດມີຈຸດສິ້ນສຸດ ແຕ່ມິດຕະພາບບໍ່ມີວັນຈົບສິ້ນ. ຂ້ອຍມີຄຳນັດໝາຍອັນອົບອຸ່ນໃນໃຈ ເມື່ອຮອດວັນຄົບຮອບ 10 ປີ ຂອງການເປີດນຳໃຊ້ ເສັ້ນທາງລົດໄຟ ລາວ–ຈີນ, ຂ້ອຍຈະນຳພານັກສຶກສາຂ້ອຍ ຂີ່ລົດໄຟຂະບວນ “ລ້ານຊ້າງ” ມຸ່ງໜ້າໄປທາງທິດເໜືອ “ກັບເມືອເຮືອນ”. ກັບ ໄປທີ່ຄຸນໝິງ, ໄປສຳຜັດວັດທະນະທຳຈີນ, ເບິ່ງສະຖານທີ່ທີ່ຂ້ອຍເຄີຍຮຽນ ແລະ ດຳລົງຊີວິດ, ໄປໂອບກອດອາຈານຜູ້ທີ່ເຄີຍສິດສອນ, ໝູ່ເພື່ອນທີ່ເຄີຍຊ່ວຍເຫຼືອ ແລະ ຄິດຮອດອີກຄັ້ງ ແລ້ວບອກພວກເຂົາຢ່າງພາກພູມໃຈວ່າ: “ເບິ່ງແມ່, ນີ້ແມ່ນບຸກຄະລາກອນລົດໄຟລຸ້ນໃໝ່ຂອງປະເທດລາວທີ່ພວກເຮົາໄດ້ຮ່ວມກັນພັດທະນາ!”

ຈາກນະຄອນຄຸນໝິງໄປຫາ ສປປ ລາວ, ທາງລົດໄຟສາຍນີ້ບໍ່ໄດ້ເຊື່ອມຕໍ່ພຽງແຕ່ສອງປະເທດ ແຕ່ຍັງເຊື່ອມໂຍງຫົວໃຈສອງດວງທີ່ຕິດແໜ້ນໃກ້ຊິດກັນ. ຂ້ອຍປາຖະໜາທີ່ຈະເປັນຜູ້ແຜ່ກະຈາຍແນວພັນນີ້, ເພື່ອໃຫ້ມິດຕະພາບລະຫວ່າງ ລາວ-ຈີນ ຈະເລີນຮຸ່ງເຮືອງເຕີບໃຫຍ່ຂະຫຍາຍຕົວ ແລະ ເບັ່ງບານງົດງາມຢ່າງບໍ່ມີວັນສິ້ນສຸດໄປຕາມການຂະຫຍາຍອອກໄປຂອງທາງລົດໄຟ.

ສາຍສຳພັນ 10 ປີ : ເສັ້ນທາງລົດໄຟ ລາວ-ຈີນ ແລະ ການເດີນທາງຂອງຂ້ອຍ

ໂດຍ: ທ່ານ MAX, ຜູ້ເຂົ້າຮ່ວມການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ

ເມື່ອຂະບວນລົດໄຟ “ລ້ານຊ້າງ” ເລີ່ມເຄື່ອນອອກຈາກຊານຊະລາ, ສາຍລົມຮ້ອນຂອງເມືອງລາວທີ່ພັດຜ່ານເຂົ້າມາ ພ້ອມກັບກິ່ນອາຍແຫ່ງຄວາມອົບເອົ້າ, ມັນໄດ້ເປີດຜ້າມ່ານແຫ່ງຄວາມຊົງຈຳຂອງຂ້ອຍ ທີ່ມີຕໍ່ເສັ້ນທາງສາຍໄໝເຫຼັກແຫ່ງນີ້ ມາຕະຫຼອດໄລຍະເວລາຫຼາຍກວ່າ 10 ປີ.

ປີ 2011 ຂ້ອຍໄດ້ເຂົ້າເຮັດວຽກຢູ່ກຸ່ມບໍລິສັດທາງລົດໄຟແຫ່ງຊາດຈີນ ແລະ ພຽງແຕ່ປີຕໍ່ມາກໍໄດ້ເດີນທາງມາຍັງປະເທດລາວ ເພື່ອກາຍເປັນໜຶ່ງໃນຜູ້ບຸກເບີກຍຸກທຳອິດ ທີ່ໄດ້ຮ່ວມກໍ່ສ້າງ ແລະ ຕິດຕາມໂຄງການທາງລົດໄຟ ລາວ-ຈີນ ມາໂດຍຕະຫຼອດ. ໃນໄລຍະນັ້ນ ຕອນທີ່ປະຈຳການຢູ່ນະຄອນຫຼວງວຽງຈັນ, ຂ້ອຍໄດ້ເຮັດວຽກທຸກບົດບາດດ້ວຍຄວາມຕັ້ງໃຈ ບໍ່ວ່າຈະເປັນນັກແປ, ຄົນຂັບລົດ ຫຼື ຜູ້ຊ່ວຍວຽກທົ່ວໄປ. ຈົນມາຮອດປີ 2015 ຫຼັງຈາກພິທີວາງສີລາລຶກ, ຂ້ອຍກໍໄດ້ຍ້າຍໄປປະຈຳການຢູ່ພາກສະໜາມກໍ່ສ້າງ ທີ່ເມືອງໄຊ ແຂວງອຸດົມໄຊ. ຊີວິດໃນຕອນນັ້ນ ແມ່ນເຕັມໄປດ້ວຍຄວາມທ້າທາຍ, ກາງເວັນກໍເຝົ້າຟັ່ງປະສານງານ, ສ່ວນກາງຄືນກໍຮີບໂຮມເອກະສານ, ເຊິ່ງມັນເປັນຊ່ວງເວລາທີ່ຕ້ອງກຽມພ້ອມຕະຫຼອດ 24 ຊົ່ວໂມງ. ແຕ່ກໍແມ່ນສິ່ງເຫຼົ່ານີ້ເອງ ທີ່ຫຼໍ່ຫຼອມໃຫ້ຂ້ອຍມີຄວາມຜູກພັນກັບເສັ້ນທາງສາຍນີ້ ຢ່າງເລິກເຊິ່ງຈົນຕັດບໍ່ຂາດ.

ໃນຊ່ວງເວລາທີ່ກໍ່ສ້າງຢູ່ເຂດແຂວງອຸດົມໄຊ, ມີເຫດການໜຶ່ງທີ່ເສດດິນຈາກການຂຸດອຸໂມງໄດ້ໄປທັບຕົ້ນຢາງພາລາຂອງຊາວບ້ານ 2ຕົ້ນ. ຂ້ອຍເອງບໍ່ໄດ້ປ່ອຍປະລະເລີຍ, ແຕ່ໄດ້ຟ້າວໄປຊອກຫາຮອດນາຍບ້ານເພື່ອໂອ້ລົມຖາມໄຖ່ເຫດການ, ແລ້ວຈຶ່ງຮີບປະສານວຽກກັບທາງຝ່າຍກໍ່ສ້າງ ເພື່ອເອົາລາຍຊື່ຕົ້ນຢາງນັ້ນ ເຂົ້າໃນແຜນການຊົດເຊີຍໃຫ້ເຈົ້າຂອງເພິ່ນຢ່າງເໝາະສົມ. ຕະຫຼອດການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ກໍແມ່ນຍ້ອນຜ່ານຄວາມໃສ່ໃຈຕໍ່ເລື່ອງເລັກໆນ້ອຍໆທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນແບບນີ້ ທີ່ເຮັດໃຫ້ພວກເຮົາຊະນະໃຈຊາວບ້ານ; ເຊິ່ງໄດ້ສ້າງເອົາຄວາມຈິງໃຈຕໍ່ກັນ ແລກມາດ້ວຍຄວາມຮ່ວມມື ແລະ ການສະໜັບສະໜູນ ເພື່ອໃຫ້ໂຄງການດຳເນີນໄປໄດ້ຢ່າງສະດວກໂລ່ງລ່ຽນ.

ລົດໄຟໄດ້ແລ່ນຜ່ານອຸໂມງມິດຕະພາບ ລາວ-ຈີນ ໄປຢ່າງສະໝ່ຳສະເໝີ. ໃນຂະນະທີ່ເບິ່ງຮູບທຸງຊາດຂອງສອງປະເທດຢູ່ເທິງຝາອຸໂມງ, ຂ້ອຍກໍໄດ້ຄິດເຖິງອຸໂມງຂ້າມແດນທີ່ມີຄວາມຍາວ 9,59 ກິໂລແມັດແຫ່ງນີ້, ເຊິ່ງເປັນໝາກຜົນແຫ່ງການສູ້ຊົນຂອງຜູ້ກໍ່ສ້າງສອງຊາດຕະຫຼອດ 1.543 ວັນ. ອຸໂມງໜຶ່ງແຫ່ງໄດ້ເຊື່ອມທັງສອງປະເທດ ບໍ່ພຽງແຕ່ທະລຸສິ່ງກີດຂວາງທາງພູມສັນຖານເທົ່ານັ້ນ, ແຕ່ມັນຍັງສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນໃນໄວໜຸ່ມຂອງຂ້ອຍ ແລະ ບັນຈຸມິດຕະພາບອັນເລິກເຊິ່ງຂອງປະຊາຊົນສອງຊາດໄວ້ຢ່າງແໜ້ນແຟ້ນ.

ແລ້ວເມື່ອຂະບວນລົດໄຟໄດ້ມາຮອດສະຖານີນະຄອນຫຼວງວຽງຈັນ, ບັນຍາກາດອັນຄຶກຄັກຢູ່ຊານຊະລາ ກໍໄດ້ເຮັດໃຫ້ຄວາມຊົງຈຳເກົ່າໆຫຼັ່ງໄຫຼເຂົ້າມາ. ບໍ່ວ່າຈະເປັນຄວາມທຸກຍາກລຳບາກ ຫຼື ຄວາມສຸກໃນຊ່ວງເວລາທີ່ຕິດຕາມໂຄງການ ແລະ ປະສານງານຢູ່ທີ່ນີ້, ໃນຕອນນີ້ທຸກຢ່າງລ້ວນແຕ່ໄດ້ກາຍມາເປັນຂອງຂວັນອັນລ້ຳຄ່າ. ເສັ້ນທາງລົດໄຟ ລາວ-ຈີນ ໃນປັດຈຸບັນ ໄດ້ປ່ຽນຈາກເສັ້ນຂີດແຕ້ມໃນແຜນຜັງມາເປັນ “ເສັ້ນທາງທອງຄຳ” ທີ່ເຊື່ອມຕໍ່ສອງປະເທດ, ທັງຊຸກຍູ້ການແລກປ່ຽນວັດທະນະທຳ ແລະ ການຮ່ວມມືດ້ານເສດຖະກິດ-ການຄ້າ. ໃນມື້ນີ້, ຂ້ອຍໄດ້ເຂົ້າຮ່ວມເຮັດວຽກກັບ ບໍລິສັດ ຢຸນນານ ຊຽງຢູ ບໍລິການຮຽບຮຽງ-ແປພາສາ ຈຳກັດ, ເພື່ອສືບຕໍ່ໃຊ້ພາສາເປັນຂົວຕໍ່ໃນການຊ່ວຍເຫຼືອການສື່ສານ ລະຫວ່າງ ລາວ ແລະ ຈີນ; ເຊິ່ງວຽກງານນີ້ ແມ່ນມີຈຸດປະສົງອັນດຽວກັນກັບຄວາມຕັ້ງໃຈໃນຕອນທຳອິດ ທີ່ຂ້ອຍໄດ້ຮ່ວມສ້າງເສັ້ນທາງລົດໄຟ ລາວ-ຈີນ.

ໃນອະນາຄົດ, ຂ້ອຍຍິນດີທີ່ຈະສືບຕໍ່ໃຊ້ພາສາເປັນຂົວຕໍ່ ເພື່ອປົກປັກຮັກສາສາຍໃຍຜູກພັນທີ່ຂ້າມຜ່ານພູຜາແຫ່ງນີ້.

(ສະໜອງຂໍ້ມູນໂດຍ: ວາລະສານ ຈຳປາ ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com